ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 1561 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2020

# ຄຳແນະນຳ

## ກ່ຽວກັບ ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານທາງອິນເຕີເນັດ, ເລກທີ 327/ລບ, ວັນທີ 16 ກັນຍາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ອອກຄຳແນະນຳ:

## ໝວດທີ I
## ບົດບັນຍັດທົ່ວໄປ

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ແນະນຳບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ໂດຍສະເພາະຜູ້ປົກຄອງເດັກໃຫ້ມີຄວາມຮັບຮູ້, ເຂົ້າໃຈ ກ່ຽວກັບກົດໝາຍ, ລະບຽບການ, ໃນການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແນໃສ່ປົກປ້ອງກຽດສັກສີ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ນຳໃຊ້ສື່ສັງຄົມອອນລາຍ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 2. ອະທິບາຍຄຳສັບ

1. **ສື່ສັງຄົມອອນລາຍ** ໝາຍເຖິງ ຮູບແບບການສື່ສານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນ ຕໍ່ເນື້ອໃນຂໍ້ມູນຂ່າວສານ, ເປັນຕົ້ນ ເຟສບຸກ, ທະວິດເຕີ, ຢູທູບ ແລະ ອື່ນໆ;

2. **ການກັ່ນແກ້ງ (Cyber bully)** ໝາຍເຖິງ ການກະທຳທີ່ກໍ່ໃຫ້ເກີດຄວາມເສັຍຫາຍ ຫຼື ຄຸກຄາມ ຜ່ານເຄືອຂ່າຍລະບົບຄອມພິວເຕີ ເຊັ່ນ: ໃສ່ຮ້າຍປ້າຍສີ, ອານາຈານ, ການກັ່ນແກ້ງ, ຂົ່ມເຫັງຜ່ານສື່ສັງຄົມອອນລາຍ;

3. ການເຂົ້າສູ່ລະບົບ (Login) ໝາຍເຖິງ ການລົງບັນທຶກເຂົ້າໃຊ້ ຄອມພິວເຕີ ແລະ ອຸປະກອນສື່ສານອື່ນໆ ຜ່ານອິນເຕີເນັດ ເພື່ອຈະເຂົ້າເຖິງຂໍ້ມູນ ຫຼື ໂປຣແກຣມ;

4. ລິ້ງ (Link) ໝາຍເຖິງ ສ່ວນທີ່ໃຊ້ໃນການເຊື່ອມຕໍ່ໜ້າເວັບເຂົ້າຫາກັນ ແລະ ເປັນສ່ວນທີ່ໃຫ້ຜູ້ໃຊ້ ສາມາດເປີດໜ້າເວັບໜ້າຕໍ່ໄປ ເພື່ອເບິ່ງຂໍ້ມູນຕາມທີ່ລິ້ງນັ້ນເຊື່ອມຕໍ່ໄວ້;

5. ໂປຣຟາຍ (Profile) ໝາຍເຖິງ ບັນຊີສ່ວນຕົວຂອງບຸກຄົນໃນສື່ສັງຄົມອອນລາຍ ທີ່ສະແດງຂໍ້ມູນຂອງ ບຸກຄົນນັ້ນໆ;

6. ແບ່ງປັນ (Share) ໝາຍເຖິງ ການສົ່ງຕໍ່ ແລະ ແບ່ງປັນຂໍ້ຄວາມ, ຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອໃນສື່ສັງຄົມອອນລາຍ;

7. ເພຍທູເພຍ (Peer-to-Peer) ໝາຍເຖິງ ການເຊື່ອມຕໍ່ເຄືອຂ່າຍໂດຍກົງ ລະຫວ່າງເຄື່ອງຄອມພິວເຕີ ໂດຍເຄື່ອງຄອມພິວເຕີແຕ່ລະເຄື່ອງຈະມີຄວາມເທົ່າທຽມກັນ;

8. ໂພສ (Post) ໝາຍເຖິງ ການເຜີຍແຜ່ຂໍ້ມູນ ເຊັ່ນ: ຂໍ້ຄວາມ, ຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອ ໃນສື່ສັງຄົມອອນລາຍ;

9. ລະບຸສະຖານທີ່ (Check in) ໝາຍເຖິງ ການເຜີຍແຜ່ທີ່ຢູ່ຕຳແໜ່ງຂອງຕົນໃນສື່ສັງຄົມອອນລາຍ ເພື່ອ ໃຫ້ຄົນອື່ນເຫັນທີ່ຢູ່ ຫຼື ສະຖານທີ່;

10. ປິດການຕິດຕາມ (Do Not Track) ໝາຍເຖິງ ປ້ອງກັນການຕິດຕາມຂອງເວັບໄຊ ທີ່ມີຢູ່ໃນ ເຄື່ອງມືເຂົ້າເວັບໄຊຕ່າງໆ ເຊັ່ນ: Firefox, Chrome, Internet Explorer ແລະ Edge ເປັນຕົ້ນ;

11. ຂ່າວປອມ ໝາຍເຖິງ ຂ່າວມີທັງຮູບແບບຂອງ ຂໍ້ຄວາມ, ຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວີດີໂອ ຖ້າຂໍ້ມູນໃນຂ່າວນັ້ນບໍ່ເປັນຄວາມຈິງ ເອີ້ນວ່າ: ຂ່າວປອມ (Fake news) ແລະ ມີການສົ່ງຕໍ່ກັນໃນວົງກວ້າງ ເຮັດໃຫ້ມີຜູ້ຫຼົງເຊື່ອເປັນຈຳນວນຫຼາຍໃນໂລກອອນລາຍ;

12. ເດັກ ໝາຍເຖິງ ບຸກຄົນທີ່ມີອາຍຸຕໍ່າກວ່າ ສິບແປດ ປີ;

13.ຜູ້ປົກຄອງ ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ.

## ໝວດທີ II
## ບັນດານິຕິກຳ ທີ່ກ່ຽວຂ້ອງກັບ ການນຳໃຊ້ສື່ສັງຄົມອອນລາຍ

### 3. ບັນດານິຕິກຳ

ປະຈຸບັນ ການນຳໃຊ້ສື່ສັງຄົມອອນລາຍເປັນພາຫະນະສື່ສານຍຸກໃໝ່ ເພື່ອເຜີຍແຜ່ຂໍ້ມູນຂ່າວສານຄວາມຄິດ ເຫັນຂອງຕົນເອງໃຫ້ຜູ້ອື່ນ ຊຶ່ງເປັນວິທີທີ່ໄວ ແລະ ໄປເຖິງຫຼາຍຄົນພ້ອມກັນ ເຖິງຢ່າງໃດກໍ່ຕາມ ສື່ສັງຄົມອອນລາຍ ກໍ່ປຽບເໝືອນດັ່ງມີດສອງຄົມມີທັງຜົນປະໂຫຍດ ແລະ ຜົນເສັຍ. ດັ່ງນັ້ນ, ເພື່ອຄຸ້ມຄອງສື່ສັງຄົມອອນລາຍ ທາງ ລັດຖະບານ ກໍ່ຄືກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ກະຊວງທີ່ກ່ຽວຂ້ອງ ຈຶ່ງໄດ້ອອກນິຕິ ກຳ ດັ່ງນີ້:

3.1 ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015.

ການສ້າງຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍ ໄດ້ລະບຸໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ ລວມມີພຶດຕິກຳ ທີ່ມີການກະທຳຜິດ ດັ່ງນີ້:

1. ການນຳເອົາຂໍ້ມູນຄອມພິວເຕີ ທີ່ມີລັກສະນະໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ໃຊ້ຄຳສັບບໍ່ສຸພາບເຂົ້າສູ່ລະບົບຄອມພິວເຕີ;

2. ການນຳເອົາຂໍ້ມູນທີ່ມີລັກສະນະໃຊ້ຄວາມຮຸນແຮງ, ຂໍ້ມູນເທັດ, ຂໍ້ມູນຫຼອກລວງ, ຂໍ້ມູນທີ່ບໍ່ເປັນຈິງ ເຂົ້າສູ່ລະບົບຄອມພິວເຕີ;

3. ການນຳເອົາຂໍ້ມູນຄອມພິວເຕີ ທີ່ເປັນການທຳລາຍຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນາທຳ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດ;

4. ການນຳເອົາຂໍ້ມູນຄອມພິວເຕີ ທີ່ມີລັກສະນະຊວນເຊື່ອ, ຍຸຍົງ ແລະ ສົ່ງເສີມປະຊາຊົນຕໍ່ຕ້ານລັດຖະບານ ຫຼື ແບ່ງແຍກຄວາມສາມັກຄີ;

5. ການໂຄສະນາຄ້າຂາຍຢາເສບຕິດ, ອາວຸດເສິກ, ອາວຸດເຄມີ, ຄ້າມະນຸດ, ຄ້າປະເວນີ, ຄ້າໂສເພນີ ແລະ ສິ່ງທີ່ຜິດກົດໝາຍ;

6. ການເຜີຍແຜ່ ຫຼື ສົ່ງຕໍ່ຂໍ້ມູນຄອມພິວເຕີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ແລະ 14 ຂອງກົດໝາຍສະບັບນີ້ ລວມທັງ ຂໍ້ 1, 2, 3, 4 ແລະ ຂໍ້ 5 ຂອງມາດຕານີ້.

3.2 ກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ) ເລກທີ 01/ສພຊ, ລົງວັນທີ 04 ພະຈິກ 2016.

ການນຳໃຊ້ສື່ສັງຄົມອອນລາຍຂອງອົງການສື່ມວນຊົນ ຢູ່ໃນມາດຕາ 60 (ໃໝ່) ໃຫ້ປະຕິບັດ ດັ່ງນີ້:

1. ເຄົາລົບຈັນຍາບັນນັກຂ່າວ;

2. ຕ້ອງລົງທະບຽນສ່ວນຕົວບຸກຄະລາກອນສື່ມວນຊົນ ຫຼື ອົງການສື່ມວນຊົນນຳອົງການຄຸ້ມຄອງສື່ມວນຊົນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ມີກາໝາຍສັນຍາລັກຂອງເວັບໄຊ ຫຼື ໜ້າເວັບ;

4. ເຄົາລົບ ແລະ ຮັບຮູ້ຂໍ້ມູນຂ່າວສານ ທີ່ຜະລິດໂດຍບຸກຄົນອື່ນໃນສື່ສັງຄົມອອນລາຍ. ຖ້າຕ້ອງການນຳໃຊ້ຂໍ້ຄວາມ, ຮູບພາບ ແລະ ສຽງຕ່າງໆ ຕ້ອງກວດສອບ ແລະ ຂໍອະນຸຍາດຈາກຜູ້ຜະລິດ ແລະ ອ້າງອີງແຫຼ່ງທີ່ມາຂອງຂໍ້ມູນຂ່າວສານ;

5. ຂໍອະນຸຍາດຈາກຄະນະຈັດຕັ້ງປະຊຸມ ກ່ອນເຜີຍແຜ່ຂໍ້ມູນຂ່າວສານຂອງກອງປະຊຸມນັ້ນ;

6. ຕ້ອງຈຳແນກຂ່າວ ແລະ ຄວາມເຫັນອອກຈາກກັນໃຫ້ຊັດເຈນ;

7. ຕ້ອງດຳເນີນການແກ້ຄວາມຜິດໂດຍທັນທີ ແລະ ສະແດງຄຳຂໍໂທດ ແລະ ໃຫ້ຜູ້ເສັຍຫາຍມີໂອກາດຊີ້ແຈງ ຖ້າມີຄວາມຜິດພາດດ້ານການສະເໜີຂໍ້ມູນຂ່າວສານທີ່ກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

8. ສະເໜີຂໍ້ມູນຂ່າວສານ ທີ່ບໍ່ລະເມີດຂໍ້ຫ້າມຂອງກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

9. ເຄົາລົບສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

3.3 ດຳລັດວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເລກທີ 327/ລບ, ລົງວັນທີ 16 ກັນຍາ 2014

ເນື້ອໃນທີ່ບໍ່ອະນຸຍາດໃຫ້ເຜີຍແຜ່ຜ່ານອິນເຕີເນັດ ໄດ້ລະບຸໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້ ມີດັ່ງນີ້:

1. ຕົວະຍົວະ, ຫຼອກລວງ ແລະ ຊວນເຊື່ອປະຊາຊົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຕໍ່ຕ້ານພັກປະຊາຊົນປະຕິວັດລາວ, ລັດຖະບານແຫ່ງ ສປປ ລາວ ຫຼື ມ້າງເພສັນຕິພາບ, ຄວາມເປັນເອກະລາດ, ອະທິປະໄຕ, ຄວາມເປັນເອກະພາບ ແລະ ຄວາມວັດທະນາຖາວອນ ຂອງ ສປປ ລາວ;

2. ຍຸຍົງ ແລະ ສົ່ງເສີມການເຄື່ອນໄຫວທີ່ເປັນການກໍ່ການຮ້າຍ, ຄາດຕະກຳ ແລະ ປັ່ນປ່ວນຕໍ່ສັງຄົມ;

3. ໂຄສະນາ ບິດເບືອນ ແລະ ປ່າວຂ່າວອະກຸສົນ ເພື່ອສ້າງຄວາມແບ່ງແຍກລະຫວ່າງຊົນເຜົ່າ ຫຼື ລະຫວ່າງ ຊາດ;

4. ເຜີຍແຜ່ ຮູບພາບລາມົກ, ຮູບຕັດຕໍ່ ແລະ ຮູບອື່ນໆ ທີ່ກົດໝາຍ ສປປ ລາວ ເກືອດຫ້າມ ຫຼື ແຕະຕ້ອງເຖິງຮີດຄອງປະເພນີອັນດີງາມຂອງຊາດ ແລະ ແຕະຕ້ອງເຖິງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ຊື້ຂາຍບໍລິການທາງເພດ;

5. ເຜີຍແຜ່ຄວາມລັບຂອງຊາດ, ທາງການທະຫານ ຫຼື ຄວາມລັບດ້ານອື່ນ ທີ່ກຳນົດໄວ້ຢູ່ໃນລະບຽບກົດໝາຍຂອງ ສປປ ລາວ;

6. ເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ບິດເບືອນຄວາມຈິງ ເພື່ອຈຸດປະສົງສ້າງຄວາມເຊື່ອມເສຍຕໍ່ກຽດສັກສີ ຫຼື ສິດທິສ່ວນບຸກຄົນຂອງຄົນອື່ນ, ພາກສ່ວນ, ສະຖາບັນ ຫຼື ອົງການອື່ນ;

7. ນຳໃຊ້ຊື່ຂອງບຸກຄົນ ຫຼື ອົງການຈັດຕັ້ງ, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ, ວີດີໂອ, ລາຍເຊັນ, ລະຫັດຕ່າງໆ, ບັດສິນເຊື່ອທະນາຄານ ຫຼື ເອກະສານສ່ວນຕົວຂອງບຸກຄົນອື່ນ ເພື່ອຜົນປະໂຫຍດ ຫຼື ເພື່ອຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ເປັນເຈົ້າຂອງ.

3.4 ມາດຕະການລົງໂທດ ຕໍ່ຜູ້ກະທຳຜິດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກະທຳຜິດທາງສື່ສັງຄົມອອນລາຍ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ ປີ 2015 ແລະ ມາດຕາ 168 ຂອງປະມວນກົດໝາຍອາຍາ ເລກທີ 26/ສພຊ , ລົງວັນທີ 17 ພຶດສະພາ 2017.

## ໝວດທີ III
## ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ

### 4. ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ

ການນຳໃຊ້ສື່ສັງຄົມອອນລາຍເຂົ້າໃນການເຜີຍແຜ່ຂໍ້ມູນຂ່າວສານສູ່ສາທາລະນະ ເປັນຕົ້ນແມ່ນ: ຮູບພາບ, ພາບເຄື່ອນໄຫວ, ເອກະສານເອເລັກໂຕຣນິກ, ສຽງ, ວີດີໂອ ແລະ ຂໍ້ຄວາມ ໂດຍຜ່ານເວັບໄຊ ແລະ ແອັບພິເຄຊັ່ນ ທີ່ນິຍົມໃຊ້ໃນປະຈຸບັນ ເຊັ່ນ: ເຟສບຸກ, ທະວິດເຕີ, ຢູທູບ ແລະ ອື່ນໆ ດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນໆ ຜ່ານອິນເຕີເນັດ ເພື່ອໃຫ້ມີຄວາມປອດໄພ ຄວນປະຕິບັດ ດັ່ງນີ້:

4.1 ການຕັ້ງຄ່າຄວາມປອດໄພ

1. ການຕັ້ງລະຫັດຜ່ານຄວນໃຫ້ມີລະຫັດຊັບຊ້ອນ ແລະ ຄາດເດົາໄດ້ຍາກ ເຊັ່ນ: ຕົວເລກ, ຕົວອັກສອນ (ນ້ອຍ-ໃຫຍ່) ແລະ ສັນຍາລັກ ຫຼື ເຄື່ອງໝາຍ ເປັນຕົ້ນ ! @ # $ ຢ່າງໜ້ອຍ 12 ຕົວຂຶ້ນໄປ;
2. ຄວນປ່ຽນລະຫັດຜ່ານຢ່າງໜ້ອຍ 03 ເດືອນ ຕໍ່ຄັ້ງ;
3. ຄວນກຳນົດການລັອກອິນ ເຂົ້າບັນຊີສື່ສັງຄົມອອນລາຍໃນຮູບແບບສອງຂັ້ນ;
(ລະອຽດການຕັ້ງຄ່າໃຫ້ເບິ່ງຕາມເອກະສານຄັດຕິດ ຂໍ້ທີ່ 7).
4. ຄວນຕັ້ງຄ່າຄວາມເປັນສ່ວນຕົວ ບໍ່ເຜີຍແຜ່ຂໍ້ມູນສ່ວນຕົວໃຫ້ຄົນອື່ນຮູ້ ເຊັ່ນ: ເບີໂທລະສັບ, ບັດປະຈຳຕົວ, ບັດທະນາຄານ ແລະ ເອກະສານສຳຄັນຕ່າງໆ;
5. ຄວນເປີດການໃຊ້ງານປິດການຕິດຕາມ (Do Not Track) ເພື່ອປ້ອງກັນການຕິດຕາມ ແລະ ການເກັບຂໍ້ມູນຂອງຜູ້ໃຫ້ບໍລິການ ຊຶ່ງອາດລວມໄປເຖິງຜູ້ບໍ່ຫວັງດີ ທີ່ລັກລອບເຂົ້າມາລັກຂໍ້ມູນ;
6. ຄວນລຶບເບີໂທລະສັບທີ່ບໍ່ໄດ້ນຳໃຊ້ແລ້ວອອກຈາກບັນຊີສື່ສັງຄົມອອນລາຍ ເພື່ອປ້ອງກັນບໍ່ໃຫ້ຖືກແຮັກດ້ວຍການນຳເອົາເບີໂທລະສັບໄປນຳໃຊ້ຕໍ່ ແລະ ຂໍລະຫັດຜ່ານຄວາມປອດໄພໄດ້;
7. ຄວນມີການອັບເດດແອັບພິເຄຊັ່ນ ຫຼື ໂປຣແກຣມ ໃຫ້ເປັນຮຸ່ນໃໝ່ຫຼ້າສຸດເປັນປະຈຳ.

**4.2 ການກວດສອບບັນຊີສື່ສັງຄົມອອນລາຍຖືກແຮັກ ຫຼື ບໍ່**

ການກວດສອບ ແມ່ນມີຫຼາຍຂັ້ນຕອນ ແຕ່ຜູ້ໃຊ້ສາມາດກວດສອບໄດ້ດ້ວຍຕົນເອງ, ຖ້າສົງໄສວ່າບັນຊີສື່ສັງຄົມອອນລາຍຂອງຕົນຖືກແຮັກ ຫຼື ບໍ່, ໃຫ້ສັງເກດພຶດຕິກຳການໃຊ້ງານ ແລະ ປະຫວັດການເຂົ້າໃຊ້ງານ.
(ລະອຽດການກວດສອບ ໃຫ້ເບິ່ງຕາມເອກະສານຄັດຕິດ ຂໍ້ທີ່ 8).

**4.3 ການລາຍງານບັນຊີປອມ ແລະ ເນື້ອຫາທີ່ບໍ່ເໝາະສົມ**

ການລາຍງານບັນຊີປອມ ແລະ ເນື້ອຫາທີ່ບໍ່ເໝາະສົມ ແມ່ນການລາຍງານໄປທີ່ເວັບໄຊ ຫຼື ສື່ສັງຄົມອອນລາຍນັ້ນ ເມື່ອພົບເຫັນ ເຊັ່ນ: ການປອມແປງບັນຊີ, ການນຳເອົາຮູບຄົນອື່ນໄປໃຊ້ໂດຍບໍ່ໄດ້ຮັບອະນຸຍາດ, ການໂພສ ຫຼື ແບ່ງປັນ ແລະ ອື່ນໆ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນເປັນຕົ້ນ.
(ລະອຽດການລາຍງານໃຫ້ເບິ່ງຕາມເອກະສານຄັດຕິດ ຂໍ້ທີ່ 9).

**4.4 ສິ່ງທີ່ຄວນປະຕິບັດໃນການນຳໃຊ້ສື່ສັງຄົມອອນລາຍ**

1. ຄວນສຶກສານິຕິກຳ ແລະ ລະບຽບການຂອງສື່ສັງຄົມອອນລາຍໃຫ້ເຂົ້າໃຈເລິກເຊິ່ງ;
2. ຄວນຄິດໃຫ້ຮອບຄອບກ່ອນທີ່ຈະໂພສ ເພາະຢ່າລືມວ່າຂໍ້ມູນນັ້ນຈະເຜີຍແຜ່ໃຫ້ທຸກຄົນສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະການໂພສຂໍ້ມູນທີ່ສຸ່ມສ່ຽງ ກໍ່ອາດຈະສົ່ງຜົນຮ້າຍຕໍ່ຕົວເຮົາເອງ;
3. ຄວນວິເຄາະ, ກັ່ນຕອງ ແລະ ໃຊ້ວິຈາລະນະຍານໃນການຮັບຂໍ້ມູນຂ່າວສານ ແລະ ແບ່ງປັນ ໃນສື່ສັງຄົມອອນລາຍ;
4. ຄວນພິຈາລະນາໃນການຮັບບຸກຄົນແປກໜ້າເປັນເພື່ອນ;
5. ຄວນລະມັດລະວັງໃນໂຄສະນາຊວນເຊື່ອອື່ນໆ ຄວນພິຈາລະນາໃຫ້ຮອບຄອບ ໂດຍສະເພາະການໂຄສະນາລະດົມທຶນ ທີ່ມີຜົນຕອບແທນສູງ;

6. ຄວນລະມັດລະວັງໃນການສະແດງຄວາມຄິດເຫັນຕໍ່ທຸກຄຳເວົ້າ ຫຼື ຂໍ້ຄວາມທີ່ບໍ່ເໝາະສົມ ກໍ່ສາມາດເຮັດໃຫ້ເກີດເປັນຄະດີຄວາມ, ທຳຮ້າຍຄວາມຮູ້ສຶກຜູ້ທີ່ໄດ້ອ່ານ ເຮັດໃຫ້ເປັນສາເຫດຂອງການຂ້າຕົວຕາຍ ແລະ ເປັນການກະທຳຜິດຕໍ່ກົດໝາຍໄດ້ອີກດ້ວຍ;
7. ຄວນມີສະຕິໃນການບໍລິໂພກຂໍ້ມູນຂ່າວສານຜ່ານສື່ສັງຄົມອອນລາຍທຸກຄັ້ງ ຊຶ່ງເຮົາສາມາດສັງເກດຂ່າວປອມທີ່ໄດ້ລະບຸໄວ້ ໃນໝວດທີ V ຂອງຄຳແນະນຳສະບັບນີ້.

**4.5 ສິ່ງທີ່ບໍ່ຄວນປະຕິບັດໃນການນຳໃຊ້ສື່ສັງຄົມອອນລາຍ**

1. ບໍ່ຄວນນຳໃຊ້ລະຫັດຜ່ານດຽວກັນກັບບັນຊີສື່ສັງຄົມອອນລາຍອື່ນໆ;
2. ບໍ່ຄວນອອກໄປພົບໝູ່ ທີ່ຕິດຕໍ່ກັນຜ່ານສື່ສັງຄົມອອນລາຍຄົນດຽວ ຄວນມີໝູ່ ຫຼື ຄອບຄົວໄປພ້ອມ ເພື່ອປ້ອງກັນການລັກພາຕົວ ແລະ ຖືກທຳຮ້າຍ;
3. ບໍ່ຄວນບັນທຶກຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອ ທີ່ບໍ່ເໝາະສົມໄວ້ໃນຄອມພິວເຕີ ຫຼື ອຸປະກອນສື່ສານ ເພາະຂໍ້ມູນນັ້ນສາມາດຮົ່ວໄຫຼໄດ້ ໂດຍການຖືກແຮັກຂໍ້ມູນ ຫຼື ຖືກດາວໂຫຼດຈາກໂປຼແກຣມ ແບບເພຍທູເພຍ (Peer-to-Peer) ທີ່ຕິດກັບແອັບພິເຄຊັ່ນ ຫຼື ໂປຣແກຣມທີ່ມີຊ່ອງໂຫວ່ ຊຶ່ງຖ້າຂໍ້ມູນຖືກຮົ່ວໄຫຼໄປໃນອິນເຕີເນັດແລ້ວ ຈະບໍ່ສາມາດລຶບໄດ້ອີກ;
4. ບໍ່ຄວນໂພສທຸກເລື່ອງທີ່ເຮົາບໍ່ພໍໃຈລົງໃນສື່ສັງຄົມອອນລາຍ ເຊັ່ນ: ບັນຫາຊີວິດສ່ວນຕົວ, ບໍ່ພໍໃຈເພື່ອນຮ່ວມງານ ແລະ ບຸກຄົນອື່ນ ເພາະວ່າຈະມີຄົນອ່ານສິ່ງທີ່ເຮົາຂຽນ ຊຶ່ງຈະເຮັດໃຫ້ມີຜົນເສຍກັບຕົວເຮົາໃນອະນາຄົດໄດ້;
5. ບໍ່ຄວນກົດ ຖືກໃຈ, ແບ່ງປັນ ຫຼື ສົ່ງຕໍ່, ສະແດງຄວາມເຫັນ ແລະ ຕິດຕາມ ສິ່ງທີ່ເປັນການສົ່ງເສີມ ການກະທຳຜິດ ຜ່ານສື່ສັງຄົມອອນລາຍ;
6. ບໍ່ຄວນເຜີຍແຜ່ ຫຼື ລະບຸສະຖານທີ່ຕ່າງໆ ເພາະເປັນການບອກສະຖານທີ່ ກໍ່ອາດຈະເປັນຊ່ອງທາງຂອງຜູ້ບໍ່ຫວັງດີເຂົ້າມາທຳຮ້າຍໄດ້;
7. ບໍ່ຄວນໂອນເງິນໃຫ້ໝູ່ໃນສື່ສັງຄົມອອນລາຍ ຄວນຢືນຢັນໃຫ້ແນ່ໃຈກ່ອນ ເນື່ອງຈາກການປອມແປງບັນຊີ ຫຼື ແຮັກບັນຊີໃນສື່ສັງຄົມອອນລາຍ ແມ່ນສາມາດເຮັດໄດ້ງ່າຍ;
8. ບໍ່ຄວນຫຼິ້ນການພະນັນທີ່ຕ້ອງຫ້າມຜ່ານສື່ສັງຄົມອອນລາຍ;
9. ບໍ່ຄວນຈັດເກັບ ຫຼື ສົ່ງຂໍ້ມູນ/ເອກະສານສຳຄັນ ທີ່ເປັນເອກະສານລັບທາງລັດຖະການ ຝາກໄວ້ໃນສື່ສັງຄົມອອນລາຍ ທີ່ມີຖານຂໍ້ມູນຢູ່ຕ່າງປະເທດ ເຊັ່ນ: ເຟສບຸກ, ທະວິດເຕີ, ຢູທູບ ແລະ ອື່ນໆ.

**4.6 ການປ້ອງກັນ ການກັ່ນແກ້ງ, ຂົ່ມເຫັງຜ່ານສື່ສັງຄົມອອນລາຍ (Cyber bully)**

ການຖືກ ກັ່ນແກ້ງ, ຂົ່ມເຫັງ ໄດ້ສ້າງຜົນກະທົບທາງຄວາມຮູ້ສຶກຈົນກາຍເປັນປົມດ້ອຍທາງຈິດໃຈ ມີຫຼາຍກໍລະນີ ບານປາຍຈົນເກີດການກະທົບທາງຮ່າງກາຍ ບາງຄົນເລືອກທຳຮ້າຍຮ່າງກາຍຕົວເອງ ໂດຍສະເພາະເຍົາວະຊົນ ແລະ ໄວໜຸ່ມ. ສະນັ້ນ, ການປ້ອງກັນການ ກັ່ນແກ້ງ, ຂົ່ມເຫັງ ຜ່ານສື່ສັງຄົມອອນລາຍ ຄວນປະຕິບັດ ດັ່ງນີ້:

1. ການຮູ້ຈັກຕົວເອງ ທາງຄວາມຄິດ, ຄວາມຮູ້ສຶກ, ການກະທຳ ແລະ ການມີຄວາມຮັບຜິດຊອບ;
2. ຄວນຮູ້ຈັກວິເຄາະໄຈ້ແຍກຂໍ້ມູນ ແລະ ບໍ່ເຊື່ອທຸກຢ່າງທີ່ເຫັນ;
3. ຄວນໃຊ້ເວລາໃນການນຳໃຊ້ສື່ສັງຄົມອອນລາຍ ຢ່າງເໝາະສົມ;

4. ຄວນຮູ້ວ່າທຸກຢ່າງທີ່ຢູ່ໃນສື່ສັງຄົມອອນລາຍ ຈະມີຮ່ອງຮອຍເຫຼືອໄວ້ຕະຫລອດໄປ ທຸກຄັ້ງກ່ອນເຮັດຫຍັງ ຕ້ອງລະມັດລະວັງ ແລະ ຄຳນຶງເຖິງຜົນກະທົບໃນອານາຄົດ;
5. ຄວນມີການເຫັນອົກເຫັນໃຈ ເອົາໃຈເພິ່ນມາໃສ່ໃຈໂຕ ບໍ່ຄວນຕັດສິນຄົນອື່ນຈາກຂໍ້ມູນຜ່ານສື່ສັງຄົມອອນລາຍ ພຽງຢ່າງດຽວ;
6. ຄວນບໍ່ຕອບໂຕ້ຂໍ້ຄວາມໄປມາໃນສື່ສັງຄົມອອນລາຍ ເພາະຈະເຮັດໃຫ້ເຫດການຮ້າຍແຮງໄປກວ່າເກົ່າ;
7. ຄວນຕັດຊ່ອງທາງການຕິດຕໍ່ ເຊັ່ນ: ລຶບ, ປິດກັ້ນບຸກຄົນທີ່ເຂົ້າມາກໍ່ກວນ ເພື່ອປິດບັນຫາທີ່ຈະເຂົ້າມາຫາ;
8. ຄວນລາຍງານພຶດຕິກຳຜູ້ໃຊ້ ທີ່ມາກໍ່ກວນຫາບໍລິສັດທີ່ໃຫ້ບໍລິການສື່ສັງຄົມອອນລາຍ.

## ໝວດທີ IV
## ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ ສຳລັບເດັກ

### 5. ການນຳໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພສຳລັບເດັກ

ປະຈຸບັນ ເດັກເຂົ້າເຖິງສື່ສັງຄົມອອນລາຍໄດ້ງ່າຍ, ສະດວກ ແລະ ເປັນປະໂຫຍດ ໂດຍສະເພາະການຮຽນ, ການສອນ ແລະ ອື່ນໆ ແຕ່ກົງກັນຂ້າມການເຂົ້າເຖິງສື່ສັງຄົມອອນລາຍໄດ້ງ່າຍ ແລະ ສ້າງຄວາມສະດວກນັ້ນ ຍັງອາດເຮັດໃຫ້ເດັກຕົກເປັນເຫຍື່ອໃນການຖືກຫຼອກລວງ ແລະ ຊອກຫາຜົນປະໂຫຍດກໍ່ໃຫ້ເກີດບັນຫາໄພຄຸກຄາມຜ່ານສື່ສັງຄົມອອນລາຍ ຊຶ່ງເປັນໄພຄຸກຄາມທາງໄຊເບີຢູ່ອັນດັບຕົ້ນໆ ຕໍ່ເດັກ ໃນ ສປປ ລາວ.

ການຈັດຕັ້ງ, ສະຖາບັນການສຶກສາ ແລະ ຜູ້ປົກຄອງເດັກຄວນເອົາໃຈໃສ່ເບິ່ງແຍງດູແລ, ໃຫ້ຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບກົດໝາຍ ແລະ ລະບຽບການ ໃນການນຳໃຊ້ສື່ສັງຄົມອອນລາຍໃຫ້ແກ່ເດັກ ທີ່ຍັງຢູ່ໃນການປົກຄອງຂອງຕົນຢ່າງເປັນປົກກະຕິ ມີລາຍລະອຽດ ດັ່ງນີ້:

### 6. ຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ເດັກ

ເດັກອາດເປັນໄດ້ທັງເຫຍື່ອ ແລະ ເປັນຜູ້ກະທຳຜິດໃນການກໍ່ກວນ, ກັ່ນແກ້ງ ກໍ່ໃຫ້ເກີດຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍ, ສິ່ງສຳຄັນທີ່ຊ່ວຍປ້ອງກັນໄດ້ຄືການບໍ່ເປີດເຜີຍຂໍ້ມູນສ່ວນຕົວ ແລະ ການເບິ່ງແຍງການນຳໃຊ້ສື່ສັງຄົມອອນລາຍຂອງເດັກ ເພາະການເປີດເຜີຍຂໍ້ມູນສ່ວນຕົວເຮັດໃຫ້ມີຄວາມສ່ຽງສູງ ຊຶ່ງຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ເດັກເປັນໄພຄຸກຄາມ ທີ່ເປັນຜົນກະທົບຕໍ່ສັງຄົມໃນປະຈຸບັນ ຄື:

#### 6.1 ຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ຮ່າງກາຍເດັກ

ອາດມີການກໍ່ກວນທີ່ໃຊ້ຄວາມຮຸນແຮງໃນກຸ່ມເດັກເອງ ຫຼື ອາດມີການໃຊ້ຄວາມຮຸນແຮງ ຜູ້ໃຫຍ່ຕໍ່ເດັກຜ່ານສື່ສັງຄົມອອນລາຍ.

#### 6.2 ຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ຈິດໃຈເດັກ

ເດັກຈະຖືກກໍ່ກວນ, ກັ່ນແກ້ງ, ປະຈານ, ເຮັດໃຫ້ອັບອາຍ, ຖືກກີດກັ້ນຈາກໝູ່, ເດັກຈະຖືກຕິດຕາມການເຄື່ອນໄຫວຜ່ານສື່ສັງຄົມອອນລາຍ ເຮັດໃຫ້ເດັກມີຄວາມຢ້ານກົວ.

#### 6.3 ຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ທາງເພດເດັກ

ການຫຼອກລວງເລື່ອງເພດ ໄດ້ຮັບເນື້ອຫາເລື່ອງເພດສຳພັນທີ່ບໍ່ເໝາະສົມ ຫຼື ຖືກຫຼອກໃຫ້ໄວ້ໃຈ ເຖິງວ່າເດັກຈະຍິນຍອມ ຫຼື ຖືກບັງຄັບກໍ່ຕາມຜ່ານສື່ສັງຄົມອອນລາຍ ແລ້ວນຳໄປສູ່ການລ່ວງລະເມີດທາງເພດ ແລະ ທີ່ສຳຄັນການຮຽກຄ່າໄຖ່ ໂດຍມີການນຳໃຊ້ຮູບພາບ ແລະ ວີດີໂອໂປ້ຂອງເດັກມາເຜີຍແຜ່.

6.4 ຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຕໍ່ຊັບສິນ ຫຼື ເສດຖະກິດເດັກ

ເດັກອາດເຂົ້າເຖິງສື່ລາມົກອານາຈານ, ສິ່ງເສບຕິດ, ຄວາມຮຸນແຮງ, ການພະນັນ ແລະ ອື່ນໆ ທີ່ຜິດຕໍ່ກົດໝາຍ ຂອງ ສປປ ລາວ, ເດັກອາດມີຄ່ານິຍົມ ແລະ ເຮັດພຶດຕິກໍາຮຽນແບບ ໃນການເຜີຍແຜ່ສິ່ງທີ່ຜິດກົດໝາຍ ຂອງ ສປປ ລາວ ຜ່ານສື່ສັງຄົມອອນລາຍ.

7. ຂໍ້ຄວນປະຕິບັດໃນການນໍາໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພສໍາລັບເດັກ

ຂໍ້ຄວນປະຕິບັດໃນການນໍາໃຊ້ສື່ສັງຄົມອອນລາຍໃຫ້ມີຄວາມປອດໄພ ສໍາລັບເດັກຄວນປະຕິບັດດັ່ງນີ້:

7.1 ຄວນມີການຈັດວາງອຸປະກອນໄວ້ບ່ອນທີ່ເບິ່ງເຫັນ ການນໍາໃຊ້ສື່ສັງຄົມອອນລາຍໄດ້ງ່າຍ ແລະ ຕິດຕັ້ງໂປຣແກຣມຕິດຕາມ ແລະ ຄວບຄຸມການນໍາໃຊ້ຂອງເດັກ;

7.2 ຄວນຕັ້ງກົດລະບຽບໃນການນໍາໃຊ້ຄອມພິວເຕີ ຫຼື ອຸປະກອນສື່ສານ ແລະ ອິນເຕີເນັດ;

7.3 ຄວນມີການຮຽນຮູ້, ກວດສອບ ແລະ ທໍາຄວາມເຂົ້າໃຈ ກ່ຽວກັບການນໍາໃຊ້ອຸປະກອນສື່ສານ, ການນໍາໃຊ້ອິນເຕີເນັດເຂົ້າເຖິງຂໍ້ມູນ, ສຶກສາແຫຼ່ງຂໍ້ມູນທີ່ໃຫ້ຄໍາແນະນໍາ ແລະ ວິທີການປ້ອງກັນໄພຄຸກຄາມທາງສື່ສັງຄົມອອນລາຍຕໍ່ເດັກ;

7.4 ຄວນຊອກຫາສື່ສັງຄົມອອນລາຍ ທີ່ເໝາະສໍາລັບເດັກ;

7.5 ກວດສອບພິຈາລະນາການກັ່ນຕອງ ແລະ ປິດກັ້ນ ໂດຍນໍາໃຊ້ໂປຣແກຣມ ທີ່ຊ່ວຍກວດສອບການນໍາໃຊ້ອິນເຕີເນັດ ແລະ ອຸປະກອນສື່ສານສ່ວນຕົວຂອງເດັກຢ່າງປອດໄພ ເປັນຕົ້ນແມ່ນລະຫັດຜ່ານ ຊຶ່ງເປັນຕົວເຊື່ອມໂຍງຄວາມລັບຂອງການນໍາໃຊ້ອິນເຕີເນັດຂອງເດັກ;

7.6 ໃຫ້ຄວາມຮູ້ແກ່ເດັກ, ອະທິບາຍກັບເດັກບໍ່ໃຫ້ເຊື່ອໃຈຄົນທີ່ບໍ່ຮູ້ຈັກມາກ່ອນ, ປົກປ້ອງເດັກບໍ່ໃຫ້ເປີດເຜີຍຂໍ້ມູນສ່ວນຕົນ, ກວດສອບວ່າເດັກເຂົ້າໃຈເຖິງຄວາມໝາຍຂອງການໂພສລົງໃນສື່ສັງຄົມອອນລາຍ ແລະ ຕັກເຕືອນເດັກໃນການສະແດງອອກເຖິງອາລົມ ແລະ ພຶດຕິກໍາທີ່ບໍ່ເໝາະສົມລົງໃນສື່ສັງຄົມອອນລາຍ;

7.7 ກວດສອບໂປຣຟາຍຂອງເດັກວ່າປະຕິບັດຕາມກົດລະບຽບຂອງການນໍາໃຊ້ສື່ສັງຄົມອອນລາຍ ແລະ ທີ່ສໍາຄັນກວດສອບວ່າເດັກບໍ່ໄດ້ໃຊ້ຂໍ້ມູນສ່ວນຕົວທີ່ສໍາຄັນ;

7.8 ຄວນມີການສື່ສານ, ເວົ້າລົມກັບເດັກແບບເປັນກັນເອງ ເຖິງການນໍາໃຊ້ສື່ສັງຄົມອອນລາຍຂອງເດັກ;

7.9 ບໍ່ຄວນເຜີຍແຜ່ຂໍ້ມູນສ່ວນຕົວເດັກ ຜູ້ປົກຄອງເດັກຕ້ອງຄໍານຶງເຖິງຂໍ້ມູນ ແລະ ຄວາມເປັນສ່ວນຕົວຂອງເດັກ ບໍ່ວ່າຈະເປັນຂໍ້ມູນພື້ນຖານຂອງເດັກ, ຮູບພາບ ແລະ ວິດີໂອ ທີ່ກ່ຽວກັບເດັກຫຼາຍເກີນໄປ ເພາະອາດມີຜູ້ບໍ່ຫວັງດີ ຕິດຕາມໃນສື່ສັງຄົມອອນລາຍ ເພື່ອຄຸກຄາມເດັກໄດ້;

7.10 ສອນ ແລະ ແນະນໍາເດັກ ໃຫ້ຮູ້ຈັກປົກປ້ອງຂໍ້ມູນສ່ວນຕົວຂອງຕົນເອງ ຄວນສອນໃຫ້ເດັກຄໍານຶງເຖິງຜົນກະທົບທີ່ຈະຕາມມາ ຫຼັງຈາກໂພສຂໍ້ມູນສ່ວນຕົວໃຫ້ເດັກຄໍານຶງເຖິງຄວາມສໍາຄັນ ແລະ ສິ່ງທີ່ຕ້ອງຮັບຜິດຊອບຫຼັງຈາກເຜີຍແຜ່ສູ່ສື່ສັງຄົມອອນລາຍ;

7.11 ຄວນບໍ່ໃຫ້ເດັກເປີດເຜີຍ ຊື່ ແລະ ນາມສະກຸນ, ທີ່ຢູ່, ໂຮງຮຽນ, ເບີໂທລະສັບ ແລະ ຂໍ້ມູນສ່ວນຕົວສໍາຄັນອື່ນໆ ຜ່ານສື່ສັງຄົມອອນລາຍ;

7.12 ຄວນແນະນໍາເດັກໃນການເລືອກຊື່ໃນການລົງທະບຽນເຂົ້າໃຊ້ສື່ສັງຄົມອອນລາຍ ເພື່ອບໍ່ໃຫ້ຊື່ນັ້ນ ສາມາດເຊື່ອມໂຍງກັບຂໍ້ມູນສ່ວນຕົວຂອງເດັກໄດ້;

7.13 ຄວນປະຕິບັດ ແລະ ແນະນໍາໃຫ້ເດັກປະຕິບັດຕາມ ໝວດທີ III ຂອງຄໍາແນະນໍາສະບັບນີ້.

8. ຂໍ້ຄວນປະຕິບັດເມື່ອເດັກເສບຕິດສື່ສັງຄົມອອນລາຍ

ເດັກທີ່ນຳໃຊ້ສື່ສັງຄົມອອນລາຍຫຼາຍຈົນກາຍເປັນການເສບຕິດ ບໍ່ວ່າຈະເປັນການເສບຕິດສື່ສັງຄົມອອນລາຍ ແລະ ອຸປະກອນສື່ສານ ກໍ່ຄືມືຖືສະມາດໂຟນ ເຮັດໃຫ້ເມື່ອຂາດມືຖືສະມາດໂຟນແລ້ວ ເກີດການວິຕົກກັງວົນ ບໍ່ສາມາດຄວບຄຸມຕົວເອງໃນການນຳໃຊ້ໄດ້ ຄວນສັງເກດ ແລະ ປະຕິບັດ ເມື່ອເດັກເສບຕິດສື່ສັງຄົມອອນລາຍ ດັ່ງນີ້:

8.1 ການສັງເກດ

1. ສັງເກດເດັກ ມີອາລົມຮ້ອນ, ມີພຶດຕິກຳບໍ່ສຸພາບ, ແຍກປ່ຽວຕົນເອງ, ມີການລັກເງິນ ແລະ ລັກວັດຖຸສິ່ງຂອງ;
2. ສັງເກດເດັກມີອາການບໍ່ຫຼັບບໍ່ນອນ, ບໍ່ຮູ້ແບ່ງເວລາ, ເຮັດຫຍັງຊັກຊ້າ, ບໍ່ສາມາດເຮັດໄດ້ຕາມກຳນົດ ແລະ ບໍ່ເຮັດວຽກເຮືອນ;
3. ສັງເກດເດັກມີອາການຫົດຫູ່, ຂີ້ຕົວະ, ຮູ້ສຶກຜິດ ແລະ ວິຕົກກັງວົນ;
4. ສັງເກດເດັກມີຄວາມສຸກ ຫຼື ບໍ່ ເມື່ອໄດ້ນຳໃຊ້ອຸປະກອນສື່ສານ ເພື່ອນຳໃຊ້ສື່ສັງຄົມອອນລາຍ;
5. ສັງເກດເດັກມີພຶດຕິກຳການນຳໃຊ້ອິນເຕີເນັດ, ອຸປະກອນສື່ສານ ແລະ ສື່ສັງຄົມອອນລາຍ ຫຼາຍເກີນໄປ ຫຼື ບໍ່;
6. ສັງເກດເດັກກ່ອນນອນໄດ້ເຂົ້ານຳໃຊ້ສື່ສັງຄົມອອນລາຍ ຫຼື ບໍ່;
7. ສັງເກດເດັກບໍ່ມັກສົນໃຈການຮໍ່າຮຽນ ແລະ ຄະແນນການຮຽນຕົກ;
8. ສັງເກດເດັກບໍ່ມັກສື່ສານປາກເວົ້າກັບຄົນອື່ນ ຫຼື ເດັກມັກເວົ້າຄົນດຽວ.

8.2 ການລະບຸສາເຫດ

ເດັກມີອາການໃດໜຶ່ງທີ່ໄດ້ກ່າວມາຂ້າງເທິງນີ້ ແມ່ນໃຫ້ລະບຸສາເຫດເບື້ອງຕົ້ນວ່າ ເດັກມີການເສບຕິດສື່ສັງຄົມອອນລາຍ ນອກນີ້ຍັງບໍ່ສາມາດຢູ່ຫ່າງຈາກອຸປະກອນສື່ສານໄດ້.

8.3 ການປ້ອງກັນ

1. ຜູ້ປົກຄອງເດັກຕ້ອງຈັດວາງອຸປະກອນເອເລັກໂຕຣນິກການສື່ສານໄວ້ບ່ອນທີ່ສາມາດຕິດຕາມໄດ້ງ່າຍ;
2. ຕິດຕາມເວັບໄຊ ແລະ ແອັບພີເຄຊັ່ນ ທີ່ເດັກນຳໃຊ້;
3. ມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງເດັກ;
4. ກຳນົດເວລາໃນການນຳໃຊ້;
5. ຈັດສັນຕາຕະລາງເວລາໃນການຮຽນໜັງສື ແລະ ກິດຈະກຳອື່ນໆ.

8.4 ການຕອບໂຕ້

1. ຊອກຫາຜູ້ຊ່ຽວຊານ ຫຼື ຄູ ສອນພິເສດ ທີ່ເດັກສົນໃຈ ແລະ ຍອມຮັບໃນຄວາມສາມາດ;
2. ຜູ້ປົກຄອງເດັກ ແລະ ຄູ ຮ່ວມມືກັນສົ່ງເສີມຄວາມສາມາດ ແລະ ສິ່ງທີ່ເດັກສົນໃຈ;
3. ປະເມີນການນຳໃຊ້ສື່ສັງຄົມອອນລາຍໃຫ້ກັບເດັກ;
4. ກຳນົດການນຳໃຊ້ສື່ສັງຄົມອອນລາຍໃຫ້ຢູ່ໃນຂອບເຂດ;
5. ສອນເດັກຮູ້ນຳໃຊ້ສື່ສັງຄົມອອນລາຍໃນທາງສ້າງສັນ, ເກີດປະໂຫຍດຕໍ່ຕົນເອງ ແລະ ສັງຄົມ;
6. ສອນສິ່ງທີ່ດີ ແລະ ບໍ່ດີ ໃນສື່ສັງຄົມອອນລາຍໃຫ້ແກ່ເດັກ.

8.5 ຄຳແນະນຳ

1. ສ້າງກິດຈະກຳໃຫ້ຫຼາຍຮູບແບບ ເພື່ອບໍ່ໃຫ້ເກີດຄວາມໜ້າເບື່ອ;
2. ຕິດຕາມ ແລະ ປະເມີນປະສິດທິພາບຂອງອຸປະກອນການສື່ສານ ທີ່ນຳໃຊ້ສື່ສັງຄົມອອນລາຍ ໃຫ້ມີຄວາມປອດໄພ;
3. ຮຽນຮູ້ ແລະ ນຳໃຊ້ທັກສະໃໝ່ໆໃຫ້ເກີດປະໂຫຍດ ເພື່ອແກ້ໄຂບັນຫາໃຫ້ກັບເດັກ;
4. ສົ່ງເສີມໃຫ້ເດັກມີກິດຈະກຳທາງສື່ສັງຄົມອອນລາຍໃຫ້ເກີດປະໂຫຍດ ຄຽງຄູ່ກັບການອອກກຳລັງກາຍ ຫຼິ້ນກິລາ;
5. ນຳພາເດັກເຂົ້າຮ່ວມກິດຈະກຳໃໝ່ໆ ຢູ່ນອກເຮືອນ.

## ໝວດທີ V
## ຂ່າວປອມ ແລະ ການຫຼິ້ນການພະນັນຜ່ານສື່ສັງຄົມອອນລາຍ

### 9. ການສັງເກດຂ່າວປອມ

ການສັງເກດຂ່າວປອມ ຄວນປະຕິບັດ ດັ່ງນີ້:

9.1 ຄວນມີສະຕິຢ່າຫຼົງເຊື່ອຫົວຂໍ້ຂ່າວ ເພາະຂ່າວປອມມັກຈະມີຂໍ້ຄວາມພາດຫົວຂໍ້ຂ່າວທີ່ເຮັດໃຫ້ຄົນ ທີ່ພົບ ເຫັນ ສະດຸດຕາຢາກກົດເຂົ້າໄປອ່ານ ຖ້າອ່ານຫົວຂໍ້ຂ່າວບໍ່ມີຄວາມເປັນໄປໄດ້ ໃຫ້ສັນນິຖານໄວ້ວ່າ ເປັນຂ່າວປອມ;

9.2 ຄວນພິຈາລະນາລິ້ງຢ່າງຖີ່ຖ້ວນລິ້ງປອມ ຫຼື ລິ້ງທີ່ຄ້າຍຄືລິ້ງແທ້ອາດເປັນສັນຍານເຕືອນວ່າ ເປັນຂ່າວປອມ ມັກຈະປອມແປງຊື່ລິ້ງໃຫ້ມີຊື່ຄືກັບເວັບໄຊທີ່ໜ້າເຊື່ອຖື;

9.3 ຄວນກວດສອບແຫຼ່ງທີ່ມາຂອງຂ່າວ ກວດສອບໃຫ້ແນ່ໃຈວ່າລິ້ງດັ່ງກ່າວຂຽນຂຶ້ນຈາກແຫຼ່ງຂ່າວ ທີ່ໜ້າເຊື່ອຖື ແລະ ມີຊື່ສຽງໃນການນຳສະເໜີຂໍ້ມູນ;

9.4 ຄວນສັງເກດຮູບພາບຂ່າວປອມມັກເອົາຮູບພາບ ທີ່ບໍ່ກ່ຽວຂ້ອງ ຫຼື ບິດເບືອນຂຶ້ນ ເພື່ອດຶງດູດຜູ້ອ່ານໃຫ້ກົດເຂົ້າເວັບໄຊ ຊຶ່ງເຮົາສາມາດກວດສອບຮູບພາບໄດ້ໃນອິນເຕີເນັດ;

9.5 ຄວນສັງເກດສິ່ງທີ່ຜິດປົກກະຕິຂອງເວັບໄຊ ຂ່າວປອມມັກສະກົດຄຳຜິດ ຫຼື ມີການຈັດວາງຮູບແບບ ທີ່ເບິ່ງບໍ່ເປັນມືອາຊີບ ຫາກເຫັນລັກສະນະເຫຼົ່ານີ້ ຄວນອ່ານຂ່າວຢ່າງລະມັດລະວັງ;

9.6 ຄວນກວດສອບວັນທີຂ່າວປອມ ອາດມີລຳດັບເຫດການທີ່ບໍ່ສົມເຫດສົມຜົນ ຫຼື ມີການປ່ຽນແປງວັນທີຂອງເຫດການ;

9.7 ຄວນກວດສອບຫຼັກຖານແຫຼ່ງຂໍ້ມູນຂອງຜູ້ຂຽນ ເພື່ອຢືນຢັນວ່າແຫຼ່ງຂໍ້ມູນນັ້ນຖືກຕ້ອງ ຂ່າວທີ່ບໍ່ມີຫຼັກຖານ ຫຼື ອ້າງອີງຜູ້ຊ່ຽວຊານທີ່ບໍ່ລະບຸຊື່ ອາດຊີ້ໃຫ້ເຫັນວ່າຂ່າວດັ່ງກ່າວເປັນຂ່າວປອມ;

9.8 ຄວນປຽບທຽບຂ່າວຈາກແຫຼ່ງຂ່າວອື່ນ ຖ້າບໍ່ມີແຫຼ່ງຂ່າວອື່ນທີ່ຂຽນເລື່ອງດຽວກັນ ອາດເປັນຂ່າວປອມໄດ້ ຖ້າຫຼາຍແຫຼ່ງຂ່າວໃຫ້ຂໍ້ມູນທີ່ກົງກັນກໍ່ມີຄວາມໜ້າເຊື່ອຖືໄດ້;

9.9 ຄວນສັງເກດເບິ່ງບາງຂ່າວກໍ່ຈົງໃຈສ້າງຂຶ້ນໃຫ້ເປັນຂ່າວປອມ ໃຊ້ວິຈາລະນະຍານໃນການອ່ານ ແລະ ສົ່ງຕໍ່ສະເພາະຂ່າວ ທີ່ເຊື່ອຖືໄດ້ເທົ່ານັ້ນ.

10. ການຫຼິ້ນການພະນັນ ຜ່ານສື່ສັງຄົມອອນລາຍ

ການພະນັນອອນລາຍ ແມ່ນການຫຼິ້ນການພະນັນຕ່າງໆ ທີ່ບໍ່ໄດ້ຮັບອະນຸຍາດຜ່ານອິນເຕີເນັດ ເປັນສິ່ງທີ່ຜິດຕໍ່ກົດໝາຍຂອງ ສປປ ລາວ ທີ່ໄດ້ກຳນົດໄວ້ໃນ ມາດຕາ 141 ການຫຼິ້ນການພະນັນທີ່ຕ້ອງຫ້າມ ຂອງປະມວນກົດໝາຍອາຍາ ເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017.

## ໝວດທີ VI

## ການແຈ້ງເຫດ ແລະ ການແຈ້ງຄວາມ

11. ການແຈ້ງເຫດ

ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ (ສູນລາວເຊີດ) ເປັນສູນກາງປະສານງານ ພາຍໃນ ແລະ ຕ່າງປະເທດ ເພື່ອແກ້ໄຂເຫດສຸກເສີນທາງລະບົບຄອມພິວເຕີ, ຮັບແຈ້ງເຫດ ແລະ ໃຫ້ຄຳປຶກສາທາງດ້ານເຕັກນິກວິຊາການ ໃນການແກ້ໄຂບັນຫາຄວາມເສັຍຫາຍ ທີ່ເກີດຂຶ້ນກັບລະບົບຄອມພິວເຕີ ແລະ ສື່ສັງຄົມອອນລາຍ ດ້ວຍຊ່ອງທາງການຕິດຕໍ່ປະສານງານ ມີດັ່ງນີ້:

**11.1 ຊ່ອງທາງໃນການແຈ້ງເຫດເມື່ອເກີດຄວາມເສັຍຫາຍຜ່ານສື່ສັງຄົມອອນລາຍຫາສູນລາວເຊີດ**

ການແຈ້ງເຫດ ສາມາດແຈ້ງໄດ້ຫຼາຍຊ່ອງທາງຕາມຄວາມສະດວກ ເຊັ່ນ:

- ເບີໂທລະສັບ +856-21-254508
- ແຟັກ +856-21-254508
- ເບີໂທລະສັບມືຖື +856-30-576422
- ອີເມວ report@laocert.gov.la
- ເວັບໄຊ https://www.laocert.gov.la
- ແອັບພິເຄຊັ່ນ ລາວເຊີດ (LaoCERT Application)

**11.2 ຂໍ້ມູນສ່ວນຕົວສຳລັບຜູ້ແຈ້ງເຫດ**

ໃນການແຈ້ງເຫດ ຄວນປະກອບຂໍ້ມູນພື້ນຖານເບື້ອງຕົ້ນທີ່ສຳຄັນ ເພື່ອໃຫ້ສາມາດເກັບກຳສະຖິຕິ ເຊັ່ນ:

- ຊື່ ແລະ ນາມສະກຸນ;
- ອາຍຸ;
- ທີ່ຢູ່ອາໃສ;
- ອາຊີບ
- ໝາຍເລກໂທລະສັບ ທີ່ໃຊ້ຕິດຕໍ່ກັບຜູ້ແຈ້ງ
- ອີເມວ ທີ່ໃຊ້ຕິດຕໍ່ກັບຜູ້ໃຊ້ ແລະ ສື່ສັງຄົມອອນລາຍ ທີ່ຜູ້ແຈ້ງໃຊ້.

**11.3 ລາຍລະອຽດຂໍ້ມູນແຈ້ງເຫດ**

ການແຈ້ງເຫດ ຄວນປະກອບຂໍ້ມູນທີ່ສຳຄັນຄັດຕິດມາພ້ອມເນື້ອໃນທີ່ກະທຳຜິດ ເພື່ອໃຫ້ເຈົ້າໜ້າທີ່ ຫຼື ຜູ້ທີ່ກ່ຽວຂ້ອງ ສາມາດເຮັດວຽກໄດ້ວ່ອງໄວຂຶ້ນ ເຊັ່ນ:

- ແອັບພິເຄຊັ່ນ ທີ່ໃຊ້ (ເຟສບຸກ, ທະວິດເຕີ, ຢູທູບ ແລະ ອື່ນໆ);
- ຊ່ວງເວລາທີ່ເກີດເຫດ;

- ປະເພດການກະທຳຜິດ (ໝິ່ນປະໝາດ, ກໍ່ກວນ, ແອບອ້າງ, ປອມແປງ ແລະ ອື່ນໆ) ຊຶ່ງລະບຸໄວ້ ໃນກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ມາດຕາ 13 ການກະທຳຜິດຜ່ານສື່ສັງຄົມອອນລາຍ;
- ຫຼັກຖານການກະທຳຜິດ (ຂໍ້ຄວາມ, ຮູບພາບ, ວີດີໂອ, ສຽງ ແລະ ລິ້ງ ເປັນຕົ້ນ).

12. ການແຈ້ງຄວາມ

ການດຳເນີນການແຈ້ງຄວາມ ແລະ ດຳເນີນຄະດີ ຜູ້ເສຍຫາຍ ສາມາດແຈ້ງກັບເຈົ້າໜ້າທີ່ຕຳຫຼວດ ໃຫ້ຊ່ວຍແກ້ໄຂບັນຫາທີ່ເກີດຂຶ້ນ ກັບອົງການຈັດຕັ້ງຂັ້ນທ້ອງຖິ່ນທີ່ຕົນເອງພັກອາໄສຢູ່ ຫຼື ສູນກາງ ແມ່ນກົມຕຳຫຼວດເສດຖະກິດກົມໃຫຍ່ຕຳຫຼວດ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

13. ການຈັດຕັ້ງປະຕິບັດ

ມອບໃຫ້ ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແນະນຳ, ຝຶກອົບຮົມ ແລະ ປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ແລະ ຜູ້ປົກຄອງເດັກ ພາຍໃນ ສປປ ລາວ ຈົ່ງຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

14. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

**ປອ. ທັນສະໄໝ ກົມມະສິດ**

ເອກະສານຄັດຕິດ


1. http://www1.si.mahidol.ac.th/Healtygamer/sites/default/files/scribd/internet_edit_18-2-57.pdf;
2. https://www.thaihealth.or.th/Content/50986-“เด็กไทย”%20รู้เท่าทัน%20ป้องกันภัยจากสื่อออนไลน์.html;
3. https://laoofficialgazette.gov.la/index.php?r=site/display&id=412
4. http://www.na.gov.la/files/laws/126ກົດໝາຍວ່າດ້ວຍ%20ການຕ້ານ%20ແລະ%20ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ%20ແລະ%20ເດັກ.pdf
5. https://www.itu.int/en/cop/Documents/guidelines-educ-e.pdf
6. https://www.laocert.gov.la/Article-90-;

7. ການຕັ້ງຄ່າຄວາມປອດໄພ ການເຂົ້າໃຊ້ ບັນຊີສື່ສັງຄົມອອນລາຍ ແບບ 02 ຂັ້ນຕອນ;

ທຸກໆບັນຊີ ສື່ສັງຄົມອອນລາຍ ຄວນມີການຕັ້ງຄ່າ ການຢືນຢັນຕົວຕົນກ່ອນ ເຂົ້າໃຊ້ 02 ຂັ້ນຕອນ ເພື່ອປ້ອງກັນ ການເຂົ້າໃຊ້ ບັນຊີສື່ສັງຄົມອອນລາຍ ແບບບໍ່ໄດ້ຮັບອະນຸຍາດ.

ວິທີການຕັ້ງຄ່າແບບນີ້ ແມ່ນທຸກຄັ້ງ ທີ່ມີການເຂົ້າໃຊ້ບັນຊີສື່ສັງຄົມອອນລາຍ ລະບົບຈະສົ່ງລະຫັດເຂົ້າເບີໂທລະສັບ ເປັນຕົວເລກ ເພື່ອຢືນຢັນໃນການເຂົ້ານຳໃຊ້.




**ຕົວຢ່າງ:** ການກຳໜົດການລັອກອິນ ເຂົ້າບັນຊີສື່ສັງຄົມອອນລາຍ ໃນຮູບແບບສອງຂັ້ນຕອນ ຂອງສື່ສັງຄົມອອນລາຍເຟສບຸກ

ກ. ເຂົ້າໄປທີ່ ຕັ້ງຄ່າ Settings ໄປທີ່ ຄວາມປອດໄພ ແລະ ລ໋ອກອິນ Security and Login ແລ້ວ ເລືອກ Two-Factor Authentication .




ຂ. ແນະນຳໃຫ້ເລືອກໃຊ້ແອັບ ແລະ ຂໍ້ຄວາມ SMS ໄປຄວບຄູ່ກັນ ເພື່ອໃຫ້ສະດວກ ເມື່ອມີການເຂົ້າໃຊ້ຢູ່ຕ່າງປະເທດ ລະບົບຈຶ່ງຈະສາມາດ ສົ່ງລະຫັດໃຫ້ໄດ້ ເວລາເປີໂທລະສັບບໍ່ມີການໃຫ້ບໍລິການ.

8. ວິທີການກວດສອບບັນຊີ ເຟສບຸກ ຖືກແຮັກ ຫຼື ບໍ່.

ກ. ວິທີການກວດສອບ ປະຫວັດການເຂົ້າໃຊ້.

ເຂົ້າໄປທີ່ ຕັ້ງຄ່າ Settings ໄປທີ່ຄວາມປອດໄພ ແລະ ລ໋ອກອິນ Security and Login ແລ້ວ ສັງເກດ ປະຫວັດການເຂົ້າໃຊ້ ດັ່ງຮູບ ວ່າເຄີຍມີອຸປະກອນອື່ນ ທີ່ບໍ່ແມ່ນອຸປະກອນຂອງເຮົາເຂົ້າໃຊ້ ຫຼື ບໍ.



ຖ້າສັງເກດເຫັນມີອຸປະກອນ ທີ່ບໍ່ແມ່ນຂອງເຮົາ ກໍມີໂອກາດສູງວ່າບັນຊີ ເຟສບຸກ ຂອງເຮົາ ອາດຖືກຄົນອື່ນແຮັກ ຫຼື ນຳໃຊ້ ໃຫ້ກົດ Log Out ອອກ ແລ້ວປ່ຽນລະຫັດໃໝ່.

ຂ. ກວດສອບ ການເຄື່ອນໄຫວ ທີ່ຜິດປົກກະຕິ ເຊັ່ນ: ໄດ້ມີ  ການ ໂພສ ຫຼື ສະແດງຄວາມຄິດເຫັນ ທີ່ບໍ່ແມ່ນເຮົາ ຫຼື ບໍ່.



ເຂົ້າໄປທີ່ ຕັ້ງຄ່າ Settings ແລ້ວເລືອກໄປທີ່  ແລ້ວສັງເກດປະຫວັດ.







9. ການລາຍງານບັນຊີ ເຟສບຸກປອມ

ກ. ໄປທີ່ໂປຣຟາຍ ບັນຊີ ເຟສບຸກປອມ ແລ້ວກົດ ... ປຸ່ມສາມເມັດ ແບບຮູບລຸ່ມນີ້





ຂ. ເລືອກ Find Support or Report Profile ຈາກນັ້ນຈະມີໜ້າຕ່າງໃຫ້ເຮົາເລືອກ ລາຍງານໂປຣຟາຍດັ່ງກ່າວ ວ່າເປັນການກະທຳຜິດ

ຄ. ໃຫ້ເລືອກ ລາຍງານຕາມຄວາມເໝາະສົມ ແລະ ໃຫ້ຖືກກັບສະພາບຕົວຈິງ ທີ່ຈະລາຍງານ.




